# ພັນທະມິດເພື່ອປະຊາທິປະໄຕໃນລາວ
## ALLIANCE FOR DEMOCRACY IN LAOS
## Alliance pour la Démocratie au Laos

*Letmather Str.71, 58119 Hagen, Germany. Tel & Fax: 0049( 2334) 44 44 668, E-Mail: alliance-lao@alice.de*

**www.laoalliance.org**


### ຖະແລງການ ພປລ ກ່ຽວກັບການໄປຢ້ຽມຢາມລາວເປັນທາງການ ຂອງກັມມະການພິເສດ ສະຫະປະຊາຊາດ ດ້ານຄວາມທຸກຍາກທີ່ສຸດ ແລະ ສິດທິມະນຸສ

ພວກເຮົາ ອົງການ ພັນທະມິດເພື່ອປະຊາທິປະໄຕ ໃນລາວ ພ້ອມທັງປະຊາຊົນລາວທັ່ງຊາດ ຢູ່ໃນປະເທດ ແລະ ຊຸມຊົນລາວຢູ່ນອກປະເທດ ໃນທົ່ວໂລກ ມີຄວາມ ພາກພູມໃຈປິຕິຊົມຊື່ນ ເປັນຢ່າງຍິ່ງ ແລະ ສະແດງຄວາມ ສັນຣະເສີນ ຕໍ່ ບົດລາຍງານ ການໄປຢ້ຽມຢາມລາວ ເປັນທາງການ ຂອງ ທ່ານ ສາສດາຈານ ຟິລິບ ອານສຕອນ ກັມມະການພິເສດ ສະຫະປະຊາຊາດ ທາງດ້ານຄວາມທຸກຍາກ ທີ່ສຸດ ແລະ ສິດທິມະນຸສ ໃນນາມເປັນນັກຄົ້ນຄວ້າ ອິສຣະພາບ ຂອງ ສະພາສິດທິມະນຸສ ສະຫະປະຊາຊາດ ທີ່ໄດ້ໄປຢ້ຽມຢາມລາວໃນຄັ້ງວັນທີ່ 18-28 ມີນາ 2019 ຜ່ານມາ ໂດຍມີ ການຈັດກອງປະຊຸມນັກຂ່າວ ທີ່ສຳນັກ ງານ ສະຫະປະຊາຊາດ ໃນວັນທີ່ 28 ມີນາ 2019 ທີ່ນະຄອນຫລວງ ວຽງຈັນ.

ຕາມບົດລາຍງານຂອງທ່ານຄັ້ງນີ ໄດ້ເປັນການເປີດເຜີຍ ຂໍ້ມູນຄວາມຈິງທີ່ປະຊາຊົນລາວໃນປະເທດ ໄດ້ຮັບ ຄວາມເດືອດຮ້ອນຢ່າງຫນັກ ບັນຫາການຖືກກົດຂີ່ທາງດ້ານສິດທິມະນຸສ ແລະ ຄວາມທຸກຈົນອັນຮ້າຍແຮງ ຍ້ອນ ນະໂຍບາຍການປົກຄອງທີ່ບໍ່ຖືກຕ້ອງໃນ ສປປລາ ປັດຈຸບັນ ຊຶ່ງທາງການ ສປປລາວ ໄດ້ພະຍາຍາມປົກປິດ ເຫດການຄວາມເປັນຈິງຕ່າງໆໃນລາວ ຜ່ານມາ.

ພາຍຫລັງ ທີ່ມີການເຄື່ອນໄຫວ ເພື່ອການປ່ຽນແປງໃນລາວ ໄປສູ່ປະຊາທິປະໄຕ ແລະ ສິດທິມະນຸສ ໃນລາວ ຂອງປະຊາຊົນລາວຢູ່ໃນແລະ ນອກປະເທດ ໃນທົ່ວໂລກ ເປັນຕົ້ນແມ່ນ ໃນວຽກງານຂອງອົງການ ພັນທະມິດເພື່ອ ປະຊາທິປະໄຕໃນລາວ ພວກເຮົາມາໄດ້ຫລາຍປີ ຢ່າງບໍ່ຢຸດຢັ້ງ ດ້ວຍຄວາມມະນາອົດທົນ ແລະຄວາມ ເສັຽສະລະ ອັນສູງສົ່ງ ໃນທີ່ສຸດ ຄວາມມຸ້ງມາດປາຖນາຂອງພວກເຮົາກໍ່ໄດ້ເລີ່ມ ປະກົດຜົນໃຫ້ເຫັນຢ່າງຫນ້າເພິ່ງພໍໃຈ.

ພວກເຮົາເຊື່ອວ່າກົງຈັກໃຫມ່ ຂອງທາງ ສະພາສິດທິມະນຸສ ສະຫະປະຊາຊາດ ທີ່ກຳລັງນຳໃຊ້ ໃນປັດຈຸບັນ ເພື່ອໃຫ້ ປະຊົນລາວ ຍື່ນຄຳຕຳນິຕິຕຽນຄວາມຜິດພາດ ຂອງ ຜູ້ກຳອຳນາດ ໃນ ສປປລາວ ສົ່ງຫາ ສະພາສິດທິມະນຸສ ສະຫະປະຊາຊາດ ເພື່ອເປັນການພັກດັນ ແກ່ ທາງການສປປລາວ ໃຫ້ ມີການປະຕິບັດ ຫລັກການສິດທິມະນຸສ ທີ່ ສະຫະປະຊາຊາດ ບົ່ງໄວ້ນັ້ນ ເປັນຄວາມຫວັງອັນໃຫມ່ ທີ່ພວກເຮົາ ມອງເຫັນວ່າ ຈະພາໃຫ້ ປະຊາຊົນລາວ ທັງຊາດ ຈະມີສິດທິຂອງຄວາມເປັນມະນຸສເພີ່ມຂຶ້ນ ແລະ ຈະນຳໄປສູ່ການປ່ຽນແປງໃນລາວ ໃຫ້ມີປະຊາທິປະໄຕ ຢ່າງແທ້ຈິງ ທັງນີ້ ກໍເພື່ອໃຫ້ ຄວາມສົມບູນພູນສຸກ ຂອງປະຊາຊົນລາວທັງຊາດ.

ທີ່ເຢັຽຣະມັນ, ວັນທີ່ 31 ມີນາ 2019




ດຣ.ບຸນທອນ ຈັນທະລາວົງ-ວີເຊີ
ປະທານພັນທະມິດເພື່ອປະຊາທິປະໄຕໃນລາວ

---


**Office in Germany: Dr. Bounthone Chanthalavong- Wiese,** President, Letmather Str.71, 58119 Hagen, Germany
Tel.& Fax: +49-2334-44 44 668, Email: chanthalavong@aol.com

**USA:** **Mr.Seng Chidhalay**, ADL USA representative, 12607 Hoover Street, Grandan Grove CA 92841, USA, celll: +1 714 343-3925, office: +1 714 372-7900, Email: sengchidhalay50@outlook.com

**Australia:** **Mr.Khampheo Lathamany**, Vice-President, 53 McIntyre Drive,Altona Vic., Australia Tel.:+61-3-9398 45 42,cell: 61-4-04169927, Email: ksithandone@hotmail.com

**Canada:** **Mr.Kambane Anonthisen,** Vice-President, 84 Highgatz Rord Kichener ,ONT, Tel. cell: 519-58 80 502, email: khambane@hotmail.com

**France:** **Mr.Sovath Thongsavat** Vice-President , ADL Fr. , 1 chemin du bief 01230 Tenay, France, Tel.+33-4-74 36 56 44, or +33- 6-63 99 42 09, Email: thinan.t@laposte.net

**New Zealand:** **Mr.Touy Manikham** Vice-President, 1 The Anchorage Whitby ,Wellington 5024, NZ, Tel.: +64-4-234 1535**,** Email: touy.manikham@gmail.com